# ບົດຖະແຫຼງຂ່າວ

# ຂອງຄະນະສະເພາະກິດ ເພື່ອປ້ອງກັນ ຄວບຄຸມ ແລະ ແກ້ໄຂ ພະຍາດອັກເສບປອດທີ່ເກີດ ຈາກເຊື້ອຈຸລະໂລກສາຍພັນໃໝ່ COVID-19

## ປະຈຳວັນ ສຸກ ວັນທີ 10 ກັນຍາ ປີ 2021

ສະບາຍດີ ບັນດາທ່ານທີ່ກຳລັງຕິດຕາມຮັບຊົມ ແລະ ຮັບຟັງ ການຖ່າຍທອດສົດຖະແຫຼງຂ່າວ ຂອງຄະນະສະເພາະກິດ **ປະຈຳວັນສຸກ ວັນທີ 10 ກັນຍາ ປີ 2021**.

- ຂ້າພະເຈົ້າ ດຣ. ຣັດຕະນະໄຊ ເພັດສຸວັນ ຫົວໜ້າກົມຄວບຄຸມພະຍາດຕິດຕໍ່, ກະຊວງ ສາທາລະນະສຸກ ຈະຖະແຫຼງຂ່າວ ກ່ຽວກັບ ສະພາບໂຄວິດ-19 ຢູ່ ສປປ ລາວ,  ໃນທົ່ວໂລກ ແລະ ບາງຂໍ້ແນະນຳເພີ່ມເຕີມ.

**ຕໍ່ໄປ ຂ້າພະເຈົ້າ ຂໍລາຍງານ:**

❖ **ສະພາບການລະບາດພະຍາດໂຄວິດ-19 ຢູ່ ສປປ ລາວ, ມາຮອດວັນທີ 9 ກັນຍາ 2021:**

ໄດ້ກວດວິເຄາະທັງໝົດ **4,371** ຄົນ, ໃນນັ້ນ ກວດພົບຜູ້ຕິດເຊື້ອໃໝ່ ທັງໝົດ **194** ຄົນ ເຊິ່ງ**ຕິດເຊື້ອໃນຊຸມຊົນ 86 ຄົນ** ເປັນຜູ້ສຳຜັດໃກ້ຊິດນຳຜູ້ຕິດເຊື້ອທີ່ຜ່ານມາ ແລະ **ກໍລະນີນຳເຂົ້າ ມີ 108 ຄົນ** ຈາກ ສະຫວັນນະເຂດ 72 ຄົນ, ຈຳປາສັກ 15 ຄົນ, ຄຳມ່ວນ 12 ຄົນ, ບໍລິຄຳໄຊ 6 ຄົນ, ນະຄອນຫຼວງວຽງຈັນ 2 ຄົນ, ແລະ ສາລະວັນ 1 ຄົນ. ເຊິ່ງກວດພົບຈາກແຮງງານລາວ ຫຼື ຜູ້ທີ່ເດີນທາງມາຈາກຕ່າງປະເທດ ເຂົ້າຕາມຈຸດຜ່ານແດນສາກົນ.

**ຜູ້ຕິດເຊື້ອໃນຊຸມຊົນ ຢູ່ນະຄອນຫຼວງວຽງຈັນ ແລະ ບັນດາແຂວງແມ່ນເປັນຜູ້ສຳຜັດໃກ້ຊິດກັບຜູ້ຕິດເຊື້ອທີ່ຜ່ານມາ ລາຍລະອຽດດັ່ງນີ້:**

- **ຈຳປາສັກ 45 ຄົນ:**
    - ບ້ານຫຼັກ 40 ມີ 18 ຄົນ, ຄົນບ້ານມ່ວງ 1 ຄົນ ແລະ ຄົນບ້ານສະໂນດ 1 ຄົນ
    - ບ້ານ ນ້ຳໃສ ເທິງ 16 ຄົນ
    - ບ້ານໜອງປັກແຮດ 9 ຄົນ
- **ຄຳມ່ວນ 26 ຄົນ:**
    - ບ້ານ ດອນຊ້າງ 3 ກໍລະນີ
    - ບ້ານ ເມືອງສຸມ 1 ກໍລະນີ
    - ບ້ານ ມ່ວງສຸ່ມ 1 ກໍລະນີ
    - ບ້ານ ຈອມແຈ້ງ 1 ກໍລະນີ

- ບ້ານ ຈອມເພັດ 4 ກໍລະນີ
- ບ້ານ ຈອມແກ້ວ 1 ກໍລະນີ
- ບ້ານ ສັນຕິສຸກ 1 ກໍລະນີ
- ບ້ານ ຈອມທອງ 2 ກໍລະນີ
- ບ້ານ ສີມສະໜຸກ 1 ກໍລະນີ
- ບ້ານ ໂພນສະອາດ 6 ກໍລະນີ
- ບ້ານ ສຸກສະຫວັນ 1 ກໍລະນີ
- ບ້ານ ຖ້ຳ 1 ກໍລະນີ

- ບ້ານ ລໍາມະລາດ 1 ກໍລະນີ
- ບ້ານ ວຽງວິໄລ 2 ກໍລະນີ

- **ບໍ່ແກ້ວ 6 ຄົນ,** ໃນນັ້ນ ມາຈາກເຂດສາມຫຼ່ຽມຄໍາ 5 ຄົນ
- **ສະຫວັນນະເຂດ 4 ຄົນ:**
  - ເພດຊາຍ, ອາຍຸ 28 ປີ, ອາຊີບ: ພະນັກງານແພດເຮັດວຽກຢູ່ເມືອງຈໍາພອນ ທີ່ໄດ້ມາປະຈໍາການຢູ່ໂຮງໝໍພາກສະໜາມ
  - ເພດຍິງ, ອາຍຸ 48 ປີ, ອາຊີບ: ແມ່ເຮືອນ, ບ້ານ ໄຊຍະມຸງຄຸນ, ເມືອງນະຄອນໄກສອນ (ສໍາຜັດໃກ້ຊິດກັບຜູ້ຕິດເຊື້ອ)

- ເພດຊາຍ, ອາຍຸ 53 ປີ, ອາຊີບ: ພະນັກງານຕຳຫຼວດ, ບ້ານຊອກ, ເມືອງນະຄອນໄກສອນ (ກຸ່ມສ່ຽງສະຖານທີ່ຊຸມຄັງ)
- ເພດຊາຍ, ອາຍຸ 49 ປີ, ອາຊີບ: ພະນັກງານຕຳຫຼວດ, ບ້ານອຸດົມວິໄລ, ເມືອງນະຄອນໄກສອນ (ກຸ່ມສ່ຽງສະຖານທີ່ຊຸມຄັງ)

- **ນະຄອນຫຼວງວຽງຈັນ 1 ຄົນ** ຈາກ ບ້ານດອນໜູນ ເມືອງໄຊທານີ
- **ສາລະວັນ 1 ຄົນ,** ເພດຍິງ, ອາຍຸ 24 ປີ, ອາຊີບຄ້າຍຂາຍ, ບ້ານຫລັກສອງ ເມືອງສາລະວັນ ຜູ້ກ່ຽວຫາກໍ່ເກີດລູກໃຫມ່ ໄດ້ 6-7 ມື້ ແລະ ຍັງຢູ່ກຳ. ຜ່ານມາ ໄດ້ສຳຜັດໃກ້ຊິດ ກັບພໍ່ປູ່ທີ່ຕິດເຊື້ອ ທີ່ໄດ້ຖະແຫຼງຂ່າວກ່ອນໜ້ານີ້.
- **ແຂວງວຽງຈັນ 1 ຄົນ** ຈາກບ້ານໂພນແພງ, ເມືອງທຸລະຄົມ ສໍາຜັດໃກ້ຊິດກັບຜູ້ເປັນແມ່ທີ່ຕິດເຊື້ອກ່ອນໜ້ານີ້.

- **ຫຼວງນ້ຳທາ 1 ຄົນ** ຈາກບ້ານ ພູຕືນ ເມືອງ ນາແລ, ຜູ້ກ່ຽວເດີນທາງມາແຕ່ ເຂດເສດຖະກິດພິເສດ ເມືອງຕົ້ນເຜີ້ງ
- **ໄຊສົມບູນ 1 ຄົນ** ຈາກບ້ານພູຄຳ
  - ➢ ປະຈຸບັນ ຜູ້ຕິດເຊື້ອໃໝ່ທັງໝົດ ໄດ້ເຂົ້ານອນແຍກປ່ຽວ ແລະ ຮັບການປິ່ນປົວຢູ່ສະຖານທີ່ປິ່ນປົວທີ່ຖືກກຳນົດໄວ້.
  - ➢ ມາຮອດມື້ນີ້ ພວກເຮົາມີຕົວເລກຜູ້ຕິດເຊື້ອສະສົມທັງໝົດ **16,936 ຄົນ**, ເສຍຊີວິດສະສົມ **16** ຄົນ ແລະ ຄົນເຈັບກຳລັງປິ່ນປົວ ທັງໝົດ **4,093** ຄົນ.
  - ➢ **ສຳລັບ ບ້ານ ທີ່ຖືກກຳນົດເປັນບ້ານແດງໃໝ່ໃນນະຄອນຫຼວງວຽງຈັນ ແມ່ນບໍ່ມີ**
- ຜູ້ທີ່ມີຈຸດປະສົງຢາກກວດຊອກຫາເຊື້ອໂຄວິດ-19 ສຳລັບ ນະຄອນຫຼວງວຽງຈັນ ຢູ່**ຈຸດເກັບຕົວຢ່າງບຶງຂະຫຍອງ** ເຊິ່ງເປີດໃຫ້ບໍລິການບັນດາທ່ານທຸກວັນ (ວັນຈັນ

ຫາ ວັນອາທິດ) ໃນຕອນເຊົ້າ ເວລາ 9:00-12:00 ໂມງ ແລະ ຍັງມີທີມງານເກັບ

ຕົວຢ່າງເຄື່ອນທີ່ໄປເກັບໃນສະຖານທີ່ທີ່ມີການລາຍງານຄົນຕິດເຊື້ອ.

- ສໍາລັບແຂວງ ແມ່ນທ່ານສາມາດໄປກວດຊອກຫາເຊື້ອໄດ້ຢູ່ໂຮງໝໍແຂວງ ຫຼື ສະຖານທີ່ທີ່ກໍານົດໄວ້.

## ➢ ການເຝົ້າລະວັງຢູ່ຕາມຈຸດຜ່ານແດນ ໃນຂອບເຂດທົ່ວປະເທດ

- ວັນທີ 9 ກັນຍາ 2021 ມີຜູ້ເດີນທາງເຂົ້າຕາມດ່ານຕ່າງໆໃນ ສປປ ລາວ ຈໍານວນ

  ທັງໝົດ **2,343** ຄົນ.

- ປັດຈຸບັນ ທົ່ວປະເທດມີສູນຈໍາກັດບໍລິເວນທີ່ຍັງເປີດຢູ່ **93** ສູນ ແລະ **54** ໂຮງແຮມ

  , ມີຜູ້ຈໍາກັດບໍລິເວນ **7,634** ຄົນ.

- **ຕໍ່ໄປນີ້ ຂ້າພະເຈົ້າຂໍລາຍງານສະພາບການຕິດເຊື້ອໃນທົ່ວໂລກ:**
  - ປັດຈຸບັນ ທົ່ວໂລກມີລາຍງານຜູ້ຕິດເຊື້ອສະສົມທັງໝົດ **223,970,007** (576,381ໃໝ່), ເສຍຊີວິດທັງໝົດ **4,619,264** (8,843ໃໝ່), ປິ່ນປົວຫາຍດີ **200,525,303** (627,521ໃໝ່) ສໍາລັບ 3 ອັນດັບ ປະເທດທີ່ມີຜູ້ຕິດເຊື້ອ ແລະ ເສຍຊີວິດຫຼາຍກວ່າໝູ່ໃນໂລກ ກໍ່ຍັງແມ່ນ ສະຫະລັດອາເມລິກາ**,** ອິນເດຍ ແລະ ບຣາຊິວ.

- **ບັນດາປະເທດທີ່ມີຊາຍແດນຕິດຈອດກັບ ສປປ ລາວ**

- ປະເທດທີ່ລາຍງານຜູ້ຕິດເຊື້ອຫຼາຍກ່ວາໝູ່ແມ່ນ ປະເທດໄທ ເຊິ່ງມີຜູ້ຕິດເຊື້ອໃໝ່ **16,031** ແລະ ເສຍຊີວິດໃນມື້ດຽວ **220** ຄົນ ຮອງລົງມາແມ່ນ ສສ ຫວຽດນາມ ມີລາຍງານຜູ້ຕິດເຊື້ອໃໝ່ **12,420** ຄົນ ແລະ ເສຍຊີວິດໃນມື້ດຽວ **272** ຄົນ.

## ບັນດາທ່ານທີ່ນັບຖື ແລະ ຮັກແພງທັງຫຼາຍ

- ປັດຈຸບັນ ສະພາບການລະບາດຂອງພະຍາດໂຄວິດ-19 ຢູ່ ສປປ ລາວ ກວດພົບເຫັນການຕິດເຊື້ອ ທັງ ກໍລະນີນໍາເຂົ້າ ແລະ ຕິດເຊື້ອໃນຊຸມຊົນ ເພີ່ມສູງຂຶ້ນຢ່າງຕໍ່ເນື່ອງໃນແຕ່ລະວັນ. ນອກຈາກນັ້ນ, ທ່າອ່ຽງການຕິດເຊື້ອໃນຫຼາຍແຂວງ ກໍ່ເພີ່ມສູງຂຶ້ນເຊັ່ນດຽວກັນ,

ໝາຍຄວາມວ່າ ທຸກຄົນ ແມ່ນມີຄວາມສ່ຽງສູງ ແລະ ສາມາດຕິດເຊື້ອພະຍາດນີ້ໄດ້ທຸກເວລາ ຖ້າຫາກບັນດາທ່ານ ປ່ອຍປະລະເລີຍ ບໍ່ຍົກສູງສະຕິຄວາມຮັບຜິດຊອບໃນການປະຕິບັດມາດຕະການປ້ອງກັນຕົນເອງ ຢ່າງເຄັ່ງຄັດ;

- ສະນັ້ນ ວິທີທີ່ດີທີ່ສຸດ ຄຽງຄູ່ກັບການປະຕິບັດມາດຕະການປ້ອງກັນການຕິດເຊື້ອນັ້ນ ກໍ່ຄືການໄດ້ຮັບວັກຊີນ ເພື່ອສ້າງພູມຄຸ້ມໃຫ້ແກ່ຕົວທ່ານເອງ ກໍ່ຄື ພູມຄຸ້ມກັນໝູ່, ສາມາດຊ່ວຍຫຼຸດຜ່ອນຄວາມຮຸນແຮງຂອງການເຈັບເປັນ ແລະ ການເສຍຊີວິດລົງໄດ້;
- ກ່ອນໜ້ານີ້ ໄດ້ຖະແຫຼງ ກ່ຽວກັບ ການນໍາໃຊ້ຢາພື້ນເມືອງລາວ ເຂົ້າປິ່ນປົວເຂົ້າໃນຄົນເຈັບໂຄວິດ-19 ໂດຍສະເພາະໃນບັນດາ ແຂວງພາກໃຕ້: ສະຫວັນນະເຂດ, ສາລະວັນ ແລະ ຈໍາປາສັກ. ຢາພື້ນເມືອງທີ່ມີສ່ວນປະກອບຂອງ ລາຊາບີ, ຜັກຄາວທອງ ແລະ ກະຊາຍຂາວ ແມ່ນຊ່ວຍເສີມສ້າງພູມຄຸ້ມກັນຂອງຮ່າງກາຍໃຫ້ດີຂຶ້ນ ທັງສາມາດບັນເທົາ ແລະ ຊ່ວຍປິ່ນປົວ ພະຍາດທາງລະບົບຫາຍໃຈ ລວມທັງພະຍາດ ໂຄວິດ-19 ນີ້;

- ອີກເທື່ອໜຶ່ງ, ຂໍຮຽກຮ້ອງມາຍັງ ພໍ່ແມ່, ພີ່ນ້ອງ, ປະຊາຊົນ ແລະ ທຸກພາກສ່ວນໃນສັງຄົມ ຈົ່ງພ້ອມໃຈກັນ ປະຕິບັດການດຳລົງຊີວິດປົກກະຕິແບບໃໝ່ (new normal) ຢ່າງເປັນປະຈຳໃຫ້ກາຍເປັນຄວາມເຄີຍຊີນ. ພວກເຮົາທຸກຄົນ ຕ້ອງຮ່ວມແຮງຮ່ວມໃຈກັນ ເປັນຈິດໜຶ່ງໃຈດຽວ ພ້ອມກັນຜ່ານຜ່າວິກິດນີ້ໄປດ້ວຍກັນ ແລະ ສາມາດກັບມາດຳລົງຊີວິດປົກກະຕິໄດ້ໂດຍໄວ.

**ມາຮອດນີ້ ການລາຍງານສະພາບພະຍາດ ໂຄວິດ-19 ປະຈຳວັນສຸກ ວັນທີ 10 ກັນຍາ ປີ 2021 ຂອງຂ້າພະເຈົ້າ ໄດ້ສິ້ນສຸດພຽງເທົ່ານີ້. ຂໍສະແດງຄວາມຂອບໃຈມາຍັງບັນດາທ່ານທີ່ຕິດຕາມຊົມ ແລະ ຮັບຟັງ (ຂອບໃຈ)**